**ສະຫລອງພະຕຣີເອກະນຸພາບ**
**ອາທິດທີ 27 ພຶດສະພາ 2018**



**ພຣະວໍລະສານໂດຍນັກບຸນມັດເທວ 28, 16-20**
ໃນເວລານັ້ນພວກອັກຄະສາວົກທັງສິບເອັດອົງພາກັນຂຶ້ນເທິງພູໜ່ວຍໜຶ່ງຢູ່ແຂວງກາລິເລ ຕາມທີ່ພຣະອົງໄດ້ສັ່ງບອກ. ເມື່ອພົບເຫັນພຣະອົງແລ້ວ ພວກເຂົາກໍພາກັນຂາບໄຫວ້ນໍາມັດສະການພຣະອົງ. ແຕ່ລາງຄົນກໍຍັງມີຄວາມສົງໄສຢູ່.
ພຣະເຢຊູເຈົ້າຊົງຫຍັບເຂົ້າໄປຫາພວກເຂົາແລະກ່າວວ່າ: ເຮົາໄດ້ຮັບສິດອໍານາດທຸກປະການໃນສະຫວັນແລະໃນແຜ່ນດິນ. ດັ່ງນີ້ພວກເຈົ້າຈົ່ງພາກັນໄປທົ່ວໂລກ ເພື່ອທໍາໃຫ້ທຸກຊາດທຸກພາສາໄດ້ກັບເປັນລູກສິດຂອງເຮົາ. ຈົ່ງລ້າງບາບໃຫ້ພວກເຂົາ ເດຊະພຣະນາມພຣະບິດາ ແລະພຣະບຸດ ແລະພຣະຈິດ. ແລະສອນໃຫ້ພວກເຂົາຖືຕາມພຣະບັນຍັດທັງມວນຂອງເຮົາ. ສ່ວນເຮົາ, ເຮົາກໍຢູ່ນໍາພວກເຈົ້າທຸກໆວັນຈົນເຖິງວັນສິ້ນພິພົບ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 28, 16-20**

ໃນກຳນົດປາສກາ, ພວກເຮົາຜູ້ເຊື່ອໃນພຣະເຈົ້າໄດ້ສະຫລອງການກັບເປັນຄືນມາຂອງອົງພຣະເຢຊູກຣິສໂຕ, ພຣະບຸດຂອງພຣະເຈົ້າ. ຕໍ່ມາ, ພວກເຮົາໄດ້ສະຫລອງພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ. ພຣະອົງຄືນເມືອຫາພຣະບິດາເພື່ອຈັດຕຽມບ່ອນໃຫ້ພວກເຮົາ. ແຕ່ພຣະອົງບໍ່ໄດ້ປະໃຫ້ພວກເຮົາຕ້ອງຢູ່ໂດດດ່ຽວ. ດັ່ງນັ້ນພຣະອົງຈຶ່ງສົ່ງພຣະຈິດຂອງພຣະເຈົ້າລົງມາຢູ່ກັບພວກເຮົາຈົນເຖິງວັນສິ້ນໂລກ.

ແລະໃນວັນອາທິດນີ້ ພຣະກຣິສຕະຈັກກຳສະຫລອງພຣະຕຣີເອກະນຸພາບ. ພຣະເຈົ້າສາມພຣະອົງແຕ່ເປັນພຣະເຈົ້າໜຶ່ງດຽວ. ສິ່ງທີ່ຊວນໃຫ້ຄິດສຳລັບຄົນໃນທຸກຍຸກທຸກສະໄໝຄື ເຮັດແນວໃດສາມພຣະເຈົ້າຈຶ່ງເປັນພຣະເຈົ້າດຽວ? ແລະສາມພຣະອົງນີ້ມາຈາກບ່ອນດຽວກັນບໍ? ທັງສາມພຣະອົງເທົ່າທຽມກັນບໍ? ເຮັດແນວໃດພວກເຮົາຜູ້ເຊື່ອໃນພຣະຕຣີເອກະນຸພາບຕາມຄຳສອນຂອງພຣະກຣິສຕະຈັກ, ພວກເຮົາຈຶ່ງສາມາດເຂົ້າໃຈແລະໃຊ້ຊີວິດຄວາມເຊື່ອນີ້ໃຫ້ເຖິງຖອງໄດ້? ພໍ່ຄິດວ່າຄຳຖາມຂ້າງເທິງນີ້ສາມາດລວມເຂົ້າເປັນຄຳຖາມດຽວທີ່ສຳຄັນຄື: ສິ່ງທີ່ເຮັດໃຫ້ຄົນສອງຄົນຫລືຫລາຍຄົນໃນໂລກນີ້ເປັນໜຶ່ງດຽວກັນແມ່ນຫຍັງ? ພວກເຮົາທຸກຄົນອາດຈະຮູ້ຄຳຕອບ ນັ້ນແມ່ນຄວາມຮັກ. ຄວາມຮັກເປັນສາຍໄຍເສື່ອມຕໍ່ລະຫວ່າງຄົນສອງຄົນທີ່ບໍ່ຮູ້ຈັກກັນໃຫ້ຫຍັບເຂົ້າຫາກັນແລະມີອຸດົມຄະຕິ, ຄວາມນຶກຄິດອັນດຽວກັນ. ແລະຄວາມຮັກນີ້ມີຈຸດປະສົງດຽວຄືໃຫ້ຜູ້ທີ່ເຮົາຮັກນັ້ນມີຊີວິດແລະຢູ່ກັບເຮົາຕະຫລອດໄປ. ເຊັ່ນຄວາມຮັກຂອງຜູ້ເປັນສາມີພັນລະຍາ. ເຖິງແມ່ນວ່າເຂົາທາງສອງຄົນຈະແຕກຕ່າງກັນ ແຕ່ຄວາມຮັກເຮັດໃຫ້ເຂົາເປັນໜຶ່ງດຽວກັນ. ຈາກນັ້ນ, ກໍມີຄວາມຮັກຂອງຜູ້ເປັນບິດາມານດາທີ່ມີຕໍ່ລູກເຕົ້າ. ເຖິງແມ່ນວ່າຜູ້ເປັນພໍ່ຈະຮັກລູກແຕກຕ່າງຈາກຜູ້ເປັນແມ່ ແຕ່ຄວາມຮັກທັງສອງທີ່ມີຕໍ່ລູກນັ້ນລ້ວນແຕ່ມີຈຸດປະສົງດຽວຄືໃຫ້ລູກຂອງຕົນເຕີບໃຫຍ່ແລະເປັນຄົນດີ.

ອາໄສຄວາມຮັກທີ່ພວກເຮົາສຳພັດໄດ້ລະຫວ່າງມະນຸດນີ້ສາມາດຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມຮັກແລະຄວາມເປັນໜຶ່ງດຽວຂອງພຣະຕຣີເອກະນຸພາບໄດ້. ເຖິງວ່າພຣະເຈົ້າຈະເປັນສາມພຣະອົງແຕ່ທັງສາມລ້ວນແຕ່ເປັນພຣະເຈົ້າແຫ່ງຄວາມຮັກ. ແລະຄວາມຮັກນີ້ມີຈຸດປະສົງຄືໃຫ້ພວກເຮົາຜູ້ເປັນລູກຂອງພຣະອົງມີຊີວິດແລະຊີວິດທີ່ໝັ້ນຄົງຖາວອນ.

ເພາະສະນັ້ນ, ໃນວັນນີ້ພຣະເຢຊູເຈົ້າຈຶ່ງກ່າວກັບພວກສາວົກວ່າ: ພວກເຈົ້າຈົ່ງໄປທົ່ວໂລກເພື່ອທຳໃຫ້ນານາຊາດໄດ້ກັບເປັນລູກສິດຂອງເຮົາດ້ວຍການໂຜດສິນລ້າງບາບໃຫ້ພວກເຂົາ ເດຊະພຣະນາມພຣະບິດາ ແລະພຣະບຸດ ແລະພຣະຈິດ. ຍ້ອນຫຍັງ? ຍ້ອນວ່າບາບໄດ້ເຮັດໃຫ້ມະນຸດກາຍເປັນຂ້ອຍທາດຂອງຄວາມຕາຍ. ສ່ວນສິນລ້າງບາບເປັນເຄື່ອງໝາຍແຫ່ງຄວາມຮັກຂອງພຣະຕຣີເອກະນຸພາບ. ຄວາມຮັກນີ້ບໍ່ພຽງແຕ່ປົດປ່ອຍພວກເຮົາອອກຈາກການເປັນຂ້ອຍທາດຂອງບາບແລະກັບມາເປັນລູກຂອງພຣະເຈົ້າເທົ່ານັ້ນ, ແຕ່ຄວາມຮັກນີ້ຍັງເຮັດໃຫ້ພວກເຮົາມີຊີວິດແລະໄດ້ຮ່ວມສີມຸງຄຸນກັບພຣະເຈົ້າ ດັ່ງທີ່ນັກບຸນເປົາໂລກ່າວໃນບົດອ່ານທີສອງເຖິງຊາວນະຄອນໂຣມາ.

ຂໍໃຫ້ວັນສະຫລອງພຣະຕຣີເອກະນຸພາບນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການເປັນລູກຂອງພຣະເຈົ້າຜ່ານທາງສິນລ້າງບາບທີ່ພວກເຮົາໄດ້ຮັບ. ແລະເປັນຕົ້ນທຸກຄັ້ງທີ່ພວກເຮົາທຳໝາຍສຳຄັນກາງເຂນ, ແມ່ນພວກເຮົາລະນຶກເຖິງຄວາມຮັກຂອງພຣະເຈົ້າສາມພຣະອົງທີ່ມີຕໍ່ພວກເຮົາ ແລະອາໄສຄວາມຮັກນີ້ພວກເຮົາຈຶ່ງໄດ້ຮັບຊີວິດຮ່ວມກັບພຣະເຈົ້າໃນສິມຸງຄຸນຂອງພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ